ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 78 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 3.7.2012.

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 1394
ວັນທີ 04/7/12

# ຂໍ້ຕົກລົງ

## ວ່າດ້ວຍການຢຸດຕິການນຳເຂົ້າລົດມືສອງ ແລະ ການໃຫ້ນະໂຍບາຍຫຼຸດຜ່ອນພາສີ-ອາກອນສຳລັບການນຳເຂົ້າລົດ Hybrid, ລົດທີ່ແລ່ນດ້ວຍອາຍແກັດ NGV, LPG ແລະ ນ້ຳມັນເຊື້ອໄຟ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມກົດໝາຍວ່າດ້ວຍສວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005;
- ອີງຕາມບົດລາຍງານ ສະບັບເລກທີ 2422/ອຄ.ກຂອ, ລົງວັນທີ 23 ທັນວາ 2011 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

## ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1 : ລົບລ້າງການໃຫ້ນະໂຍບາຍຫຼຸດຜ່ອນພາສີ-ອາກອນ ສຳລັບການນຳເຂົ້າລົດ Hybrid, ລົດ ນຳໃຊ້ແກັດ NGV, LPG, ນຳມັນເຊື້ອໄຟ ແລະ ລົດມືສອງ ແກ່ບັນດາບໍລິສັດ ທີ່ໄດ້ຮັບນະໂຍບາຍຈາກລັດຖະບານໃນໄລຍະຜ່ານມາ, ສະເພາະຈຳນວນລົດທີ່ນຳເຂົ້າບໍ່ໝົດ. ສ່ວນລົດທີ່ໄດ້ສັ່ງຊື້ກ່ອນມື້ມີແຈ້ງການໃຫ້ຢຸດເຊົາ ແລະ ໄດ້ນຳເຂົ້າມາກ່ອນວັນທີ 28 ມີນາ 2012 ຕາມຂໍ້ມູນຜົນການກວດກາຄັ້ງວັນທີ 14/02-28/03/2012 ຂອງຄະນະກຳມະການກວດກາ ແມ່ນເຫັນດີແກ້ໄຂໃຫ້ບໍລິສັດເສຍພາສີ-ອາກອນ ຕາມນະໂຍບາຍທີ່ລັດຖະບານໄດ້ຕົກລົງໄປແລ້ວ.

ມາດຕາ 2 : ຢຸດເຊົາການນຳເຂົ້າລົດມືສອງຢ່າງສິ້ນເຊີງ ນັບແຕ່ມື້ມີແຈ້ງການ ຂອງຫ້ອງວ່າການລັດຖະບານ ສະບັບເລກທີ 191/ຫລບ.ກສສ, ລົງວັນທີ 08/02/2012 ຍົກເວັ້ນກົນຈັກໜັກ ເພື່ອຮັບໃຊ້ການຜະລິດ ແມ່ນສາມາດນຳເຂົ້າໄດ້ ແຕ່ຕ້ອງຮັບປະກັນດ້ານຄຸນນະພາບ, ມີອາຍຸການນຳໃຊ້ ແລະ ຄົບຕາມ ມາດຕະຖານທີ່ກຳນົດໄວ້. ສຳລັບລົດມືສອງທີ່ໄດ້ສັ່ງຊື້ກ່ອນມື້ມີແຈ້ງການໃຫ້ຢຸດເຊົາ ແລະ ໄດ້ນຳເຂົ້າມາຄ້າງຢູ່ສາງກ່ອນວັນທີ 28 ມີນາ 2012 ຕາມຂໍ້ມູນຜົນການກວດກາ ຄັ້ງວັນທີ 14/02-28/03/2012 ຂອງຄະນະກຳມະການກວດກາ ແມ່ນເຫັນດີໃຫ້ນຳເຂົ້າ ແລະ ປະຕິບັດ

470077

ຕາມນະໂຍບາຍທີ່ລັດຖະບານໄດ້ຕົກລົງແລ້ວ. ຖ້າຍັງມີການນຳເຂົ້າລົດມືສອງເຂົ້າມາ ພາຍຫຼັງວັນທີ 28/03/2012 ແມ່ນໃຫ້ສົ່ງອອກຄືນ ແລະ ບໍ່ອະນຸຍາດໃຫ້ມີການປະເມີນລາຄາເພື່ອເສຍພາສີ-ອາກອນນຳເຂົ້າ, ຖ້າຝ່າຝືນແມ່ນໃຫ້ດຳເນີການເພື່ອຍຶດເປັນຂອງລັດ ຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005 ກຳນົດໄວ້.

ມາດຕາ 3 : ບັນດາບໍລິສັດ ທີ່ຈະນຳເຂົ້າພາຫະນະທຸກປະເພດ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມຂໍ້ຕົກລົງ ສະບັບເລກທີ 0919/ອຄ.ກຂອ, ລົງວັນທີ 12/05/2009 ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ວ່າງອອກ ແລະ ການນຳເຂົ້າພາຫະນະທຸກປະເພດຕ້ອງເສຍພາສີ-ອາກອນ ຕາມອັດຕາ ທີ່ກົດໝາຍກຳນົດໄວ້.

ມາດຕາ 4 : ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ແກ້ໄຂຕົວຈິງໃຫ້ສຳເລັດຂາດຕົວ ຕາມພາລະບົດບາດ ແລະ ສິດຂອງຕົນ ເປັນແຕ່ລະກໍລະນີ ໂດຍອີງໃສ່ຂໍ້ມູນຜົນການກວດກາ ຄັ້ງວັນທີ 14/02-28/03/2012 ຂອງຄະນະກຳມະການກວດກາ.

ມາດຕາ 5 : ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 6 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

ທອງສິງ ທຳມະວົງ